ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ
ເຈົ້າໜ້າທີ່ທະບຽນວິສາຫະກິດ

ເລກທີ 16 /ຈທວ
ນະຄອນຫຼວງວຽງຈັນ, ວັນທີ 28 ກຸມພາ 2022

ແຈ້ງການ

ເຖິງ: ບັນດາພາກສ່ວນຕ່າງໆ (ທັງພາກລັດ ແລະ ເອກະຊົນ) ໃນຂອບເຂດທົ່ວປະເທດ
ເລື່ອງ: ຍົກເລີກແຈ້ງໂຈະການເຄື່ອນໄຫວທຸລະກິດຊື່ຄາວຂອງວິສາຫະກິດ ຈຳນວນ 2 ຫົວໜ່ວຍ ຕາມໜັງສືສະເໜີຂອງກົມສ່ວຍສາອາກອນ ກະຊວງການເງິນ

- ອີງຕາມ ກົດໝາຍວ່າດ້ວຍວິສາຫະກິດ ເລກທີ 46/ສພຊ, ລົງວັນທີ 26 ທັນວາ 2013;
- ອີງຕາມ ແຈ້ງໂຈະການເຄື່ອນໄຫວທຸລະກິດຊື່ຄາວ ເລກທີ 210/ຈທວ, ລົງວັນທີ 18 ສິງຫາ 2021;
- ອີງຕາມ ໜັງສືສະເໜີຂອງກົມສ່ວຍສາອາກອນ, ກະຊວງການເງິນ ເລກທີ 0225/ກສອ, ລົງວັນທີ 26 ມັງກອນ 2022.

ເຈົ້າໜ້າທີ່ທະບຽນວິສາຫະກິດ, ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ ກະຊວງອຸດສາຫະກຳ ແລະ ການຄ້າ ແຈ້ງໃຫ້ບັນດາພາກສ່ວນຕ່າງໆ (ທັງພາກລັດ ແລະ ເອກະຊົນ) ໃນຂອບເຂດທົ່ວປະເທດ ຊາບວ່າ:

1. ຍົກເລີກແຈ້ງໂຈະການເຄື່ອນໄຫວທຸລະກິດຊື່ຄາວ ຂອງວິສາຫະກິດ ຈຳນວນ 2 ຫົວໜ່ວຍ ຕາມໜັງສືສະເໜີຂອງ ກົມສ່ວຍສາອາກອນ, ກະຊວງການເງິນ ເລກທີ 0225/ກສອ, ລົງວັນທີ 26 ມັງກອນ 2022. ເຮັດໃຫ້ວິສາຫະກິດດັ່ງກ່າວ ສາມາດສືບຕໍ່ເຄື່ອນໄຫວໄດ້ໂດຍໃຫ້ສອດຄ່ອງຕາມກົດໝາຍ ແລະ ລະບຽບການກ່ຽວຂ້ອງ ນັບແຕ່ວັນທີ່ອອກແຈ້ງການສະບັບນີ້ ເປັນຕົ້ນໄປ;

2. ສຳລັບ ວິສາຫະກິດ ທີ່ຍັງຖືກມາດຕະການ ຕາມໜັງສືແຈ້ງໂຈະການເຄື່ອນໄຫວທຸລະກິດຊື່ຄາວ ສະບັບເລກທີ 210/ຈທວ ລົງວັນທີ 18 ສິງຫາ 2021 ແມ່ນໃຫ້ສືບຕໍ່ເຂົ້າໄປພົວພັນກັບເຈົ້າໜ້າທີ່ສ່ວຍສາອາກອນ, ກົມສ່ວຍສາອາກອນ, ກະຊວງການເງິນ **ກ່ອນວັນທີ 28 ມັງກອນ 2022** ເພື່ອປະຕິບັດໃຫ້ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ ຂອງຂະແໜງສ່ວຍສາອາກອນ. ຖ້າພາກ ສ່ວນກຳນົດເວລາຂ້າງເທິງນີ້ ວິສາຫະກິດດັ່ງກ່າວ ຈະຖືກພິຈາລະນາແຈ້ງໂຈະການເຄື່ອນໄຫວທຸລະກິດ ຖາວອນ;

3. ຈຳນວນ ວິສາຫະກິດທີ່ສືບຕໍ່ໂຈະ ແລະ ຍົກເລີກໂຈະ ການເຄື່ອນໄຫວທຸລະກິດຊື່ຄາວ ມີດັ່ງນີ້:

ຈຳນວນແຈ້ງໂຈະຊື່ຄາວທັງໝົດ	ຍົກເລີກຜ່ານມາ	ຍົກເລີກຄັ້ງນີ້	ຈຳນວນທີ່ຍັງເຫຼືອປັດຈຸບັນ
210 ຫົວໜ່ວຍ	49 ຫົວໜ່ວຍ	2 ຫົວໜ່ວຍ	159 ຫົວໜ່ວຍ

ນອກນີ້ທ່ານຍັງສາມາດກວດສອບ ໄດ້ຕາມຄີອາໂຄດ (QR Code) ຄັດຕິດແຈ້ງການສະບັບນີ້ ຫຼື ໂດຍຜ່ານເວັບໄຊ້ WWW.NED.MOIC.GOV.LA ຫຼື Facebook ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ.

ດັ່ງນັ້ນ, ຈຶ່ງແຈ້ງມາເພື່ອຊາບ ແລະ ປະຕິບັດ.

ເຈົ້າໜ້າທີ່ທະບຽນວິສາຫະກິດ

(ສືບຕໍ່ໂຈະຊື່ຄາວ) (ຍົກເລີກໂຈະຊື່ຄາວ)

ອະພິສິດ ແສງສຸລິວົງ

ບ່ອນສົ່ງ:
- ກົມສ່ວຍສາອາກອນ 1 ສະບັບ;
- ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ 1 ສະບັບ;
- ວິສາຫະກິດທີ່ກ່ຽວຂ້ອງ 1 ສະບັບ;
- ສຳເນົາ 1 ສະບັບ.

ສແກນດ້ວຍ CamScanner